ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

Lao

ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission

ເລກທີ 030/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 31 AUG 2015

# ຂໍ້ຕົກລົງ

## ວ່າດ້ວຍການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງ ຜູ້ລົງທຶນຕ່າງປະເທດ ໃນບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມການສະເໜີຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສະບັບເລກທີ 0976/ຜ-ຟຟລ, ລົງວັນທີ 18 ມິຖຸນາ 2015;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງ ສຳນັກງານ ຄຄຊ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະບັບເລກທີ 015/ສຄຄຊ ລົງວັນທີ 16 ກໍລະກົດ 2015.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ ດັ່ງນີ້:

**ມາດຕາ 1.** ອະນຸຍາດໃຫ້ ຜູ້ລົງທຶນຕ່າງປະເທດປະເພດທົ່ວໄປ ລວມກັນທັງໝົດ ສາມາດຖືຄອງຮຸ້ນໃນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ບໍ່ເກີນ 25% ຂອງຈຳນວນຮຸ້ນທັງໝົດ. ໃນນັ້ນ ຜູ້ລົງທຶນຕ່າງປະເທດປະເພດບຸກຄົນ 1 ລາຍ ສາມາດຖືຄອງໄດ້ ບໍ່ເກີນ 1% ແລະ ປະເພດນິຕິບຸກຄົນ 1 ສະຖາບັນ ສາມາດຖືຄອງໄດ້ ບໍ່ເກີນ 5% ຂອງຈຳນວນຮຸ້ນທັງໝົດ.

**ມາດຕາ 2.** ສຳນັກງານ ຄຄຊ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງສະບັບ ເລກທີ 021/ຄລຕ ລົງວັນທີ 5 ມັງກອນ 2012.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ດຣ.ບຸນປອນ ບຸດຕະນະວົງ